*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ພະຍາດໄຂ້ຍູງ

*ພະຍາດໄຂ້ຍູງແມ່ນພະຍາດທີ່ເກີດເຊື້ອໄວຣັສ ຊຶ່ງອາດ ເປັນ ອັນຕຣາຍເຖິງແກ່ຊີວິດໄດ້ທີ່ແຜ່ຜາຍຜ່ານຍູງ ຊຶ່ງມີຢູ່ຕາມບາງເຂດ ຂອງ ອະເມຣິກາໃຕ້ ແລະ ອາຟຣິກາ. ຄົນທີ່ຈະເດີນໄປເຂດນີ້ ຂອງໂລກຕ້ອງ ໄດ້ສັກຢາປ້ອງກັນ.*

## ພະຍາດໄຂ້ຍູງແມ່ນຫຍັງ?

ພະຍາດໄຂ້ຍູງແມ່ນພະຍາດທີ່ເກີດຈາກເຊື້ອໄວຣັສຊຶ່ງສາມາດແຜ່ຜາຍໄປຫາຄົນໄດ້ ຈາກຍູງຊຶ່ງມີຢູ່ຕາມບາງເຂດຂອງອະເມຣິກາໃຕ້ ແລະ ອາຟຣິກາ.

## ໂຣກນີ້ມີອາການຫຍັງແດ່?

- ອາການຂອງຄົນຕິດເຊື້ອຮວມມີ ການຖືຄືງໄຂ້ໃນທັນທີ, ໜາວສັ່ນ, ເຈັບປວດຕາມກ້າມເນື້ອ, ເຈັບຫຼັງ, ເຈັບຫົວ, ປຸ້ນທ້ອງ ແລະ ຮາກ ໃນລະຫວ່າງສາມຫາຫົກມື້ ຫຼັງຈາກທີ່ເຊື້ອໄວຣັສເຂົ້າໄປໃນຮ່າງກາຍ. ຫຼັງຈາກ ສາມຫາສີ່ ມື້ ຄົນເຈັບສ່ວນຫຼາຍກໍຈະ ຮູ້ສຶກດີຂຶ້ນແລະອາການຕ່າງໆກໍຈະຫາຍໄປໃນທີ່ສຸດ.
- ຢ່າງໃດກໍດີ, ປະມານ 15% ຂອງຄົນເຈັບຈະສືບຕໍ່ເລີ້ມມີອາການເລືອດອອກ (ຈາກປາກ, ດັງແລະຕາ ແລະ/ຫຼື ຈາກທ້ອງ), ເຈັບໃນຊ່ອງທ້ອງ ຕາມດ້ວຍການຮາກ ແລະ ມີບັນຫາດ້ານການທຳງານຂອງໝາກໄຂ່ຫຼັງ. ຈຳນວນເຄິ່ງນຶ່ງຂອງຄົນເຈັບດັ່ງກ່າວຈະຫາຍຈາກພະຍາດ ແຕ່ວ່າ ຈຳນວນອີກເຄິ່ງນຶ່ງທີ່ເຫຼືອນັ້ນຈະເສັຍຊີວິດພາຍໃນ 10-14 ມື້ຫຼັງຈາກມີອາການເຫຼົ່ານີ້.

## ໂຣກນີ້ແຜ່ຜາຍຢ່າງໃດ?

- ຄົນແລະລີງແມ່ນພວກທີ່ຕິດເຊື້ອໄວຣັສນີ້ຫຼາຍທີ່ສຸດ.
- ຍູງບາງພັນທີ່ເອີ້ນວ່າ Aedes aegypti ເປັນຍູງນຳເຊື້ອໄວຣັສນີ້ໄປແຜ່ຜາຍ
- ຈະໃຊ້ເວລາ ສາມຫາຫົກມື້ ກ່ອນທີ່ການເຈັບປ່ວຍຈະອອກອາການຫຼັງຈາກທີ່ຄົນຖືກຍູງນຳເຊື້ອກັດ
- ຄົນທີ່ມີເຊື້ອສາມາດແຜ່ຜາຍເຊື້ອໂຣກໃຫ້ຍູງໄດ້ຈົນເຖິງ 5 ມື້ຫຼັງຈາກທີ່ເລີ້ມມີການສໍ່ອາການ
- ເຊື້ອໂຣກຈະບໍ່ແຜ່ຜາຍໂດຍຕົງຈາກຄົນນຶ່ງໄປຫາອີກຄົນນຶ່ງ ຫຼື ຈາກສັດເຖິງຄົນ.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດເຊື້ອໂຣກນີ້?

ພະຍາດໄຂ້ຍູງມີຢູ່ໃນອາຟຣິກາແລະອະເມຣິກາໃຕ້ ຢູ່ໃນປະເທດທີ່ຕັ້ງຢູ່ໃກ້ກັບເສັ້ນຜ່າສູນສູດ. ນັກທ່ອງທ່ຽວທີ່ໄປຢ້ຽມຢາມທີ່ບໍ່ໄດ້ ສັກຢາປ້ອງກັນ, ແລະປະຊາຊົນທີ່ອາສັຍຢູ່ໃນເຂດເຫຼົ່ານີ້ ແມ່ນສ່ຽງຕໍ່ການຕິດເຊື້ອນີ້.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

ການສັກຢາປ້ອງກັນແມ່ນວິທີການທີ່ໄດ້ຜົນທີ່ສຸດຕໍ່ການປ້ອງກັນພະຍາດໄຂ້ຍູງ.

- ຕ້ອງໄດ້ໄປຮັບການສັກຢາຢູ່ທີ່ສູນສັກຢາກັນໂຣກທີ່ໄດ້ຖືກຮັບຮອງ ແລະ ທາງສູນຕ້ອງໄດ້ອອກໃບຮັບຮອງວ່າໄດ້ຮັບການ ສັກຢາປ້ອງກັນໂຣກໄຂ້ຍູງສາກົນໃຫ້. ທາງໜ່ວຍສາທາຣະນະສຸກທ້ອງຖິ່ນຂອງທ່ານສາມາດໃຫ້ລາຍຊື່ຂອງສູນສັກຢາກັນໂຣກທີ່ຖືກຮັບຮອງນີ້ແກ່ທ່ານໄດ້ (ກະຣຸນາເບິ່ງຣາຍລະອຽດສຳລັບຕິດຕໍ່ໄດ້ຂ້າງລຸ່ມນີ້)
- ພາຍໃຕ້ກົດໝາຍວ່າດ້ວຍການກວດກາເຊື້ອໂຣກ ປີ 1908 *(Australian Quarantine Act, 1908)* ຄົນໃດທີ່ມີອາຍຸເກີນນຶ່ງປີ ຂຶ້ນໄປຕ້ອງມີໃບຮັບຮອງການສັກຢາປ້ອງກັນໂຣກໄຂ້ຍູງສາກົນ ຖ້າວ່າເຂົາເຈົ້າໄດ້ຄ້າງຢູ່ໃນເຂດທີ່ຖືກປະກາດໃຫ້ເປັນ ເຂດ ໄຂ້ຍູງ ເປັນເວລານຶ່ງຄືນຫຼືເກີນກວ່ານັ້ນ ພາຍໃນຫົກມື້ກ່ອນເດີນທາງມາຮອດອອສເຕຣເລັຍ. ທ່ານສາມາດເຂົ້າໄປເບິ່ງລາຍ ຊື່ ຂອງປະເທດທີ່ຖືກປະກາດໃຫ້ເປັນເຂດໄຂ້ຍູງໄດ້ ທີ່: http://www.health.gov.au/internet/wcms/publishing.nsf/content/health-pubhlth-strateg-communic-factsheets-yellow.htm
- ມີຫຼາຍໆປະເທດອາດປະຕິເສດບໍ່ໃຫ້ຄົນທີ່ມາຈາກປະເທດທີ່ຖືກປະກາດວ່າເປັນເຂດໄຂ້ຍູງເມື່ອໝໍ່ໆເຂົ້າປະເທດຂອງຕົນ ຖ້າຫາກວ່າ ຄົນໆນັ້ນບໍ່ມີໃບຢັ້ງຢືນການສັກຢາກັນໂຣກໄຂ້ຍູງ, ແລະບາງປະເທດກໍອາດຈະອະນຸຍາດໃຫ້ຜູ້ທີ່ບໍ່ທັນໄດ້ສັກຢາ ປ້ອງກັນ ເຂົ້າປະເທດຂອງຕົນໄດ້ ຫຼັງຈາກທີ່ໄດ້ທຳການສັກຢາຢູ່ເຂດຊາຍແດນເສັຍກ່ອນ. ການສັກຢາຢູ່ໃນກໍຣະນີດັ່ງກ່າວ ອາດບໍ່ມີການຮັບປະກັນເຣື່ອງການຂ້າເຊື້ອ.
- ຜູ້ທີ່ມາຮອດອອສເຕຣເລັຍຈາກປະເທດທີ່ມີພະຍາດໄຂ້ຍູງໂດຍບໍ່ມີໃບຢັ້ງຢືນການສັກຢາຈະໄດ້ຖືກສຳພາດເມື່ອມາຮອດ ໂດຍເຈົ້າໜ້າທີ່ຂອງຜແນກກວດກາເຊື້ອໂຣກ Australian Quarantine Inspection Service (AQIS). ເຈົ້າໜ້າທີ່ AQIS ຈະອະນຸຍາດໃຫ້ຄົນທີ່ບໍ່ໄດ້ສັກຢາປ້ອງກັນເຂົ້າປະເທດອອສເຕຣເລັຍໄດ້ກໍຕໍ່ເມື່ອເຂົາເຈົ້າຊຸນຮັບເປັນລາຍລັກອັກສອນວ່າຕົນຈະລາຍງານໃຫ້ທາງການສາທາຣະນະສຸກຊາບຖ້າຫາກວ່າມີອາການໃດໆຂອງພະຍາດໄຂ້ຍູງເກີດຂຶ້ນພາຍໃນລະຍະຫົກມື້ຫຼັງຈາກທີ່ເຂົາໄດ້ອອກຈາກດິນແດນຂອງເຂດໄຂ້ຍູງ.

ນອກນີ້ ຜູ້ທີ່ເດີນທາງໄປປະເທດໃນເຂດໄຂ້ຍູງ ຄວນໃຊ້ຄວາມຣະມັດຣະວັງທຸກວິທີທາງເພື່ອຫຼີກເວັ້ນການຖືກຍູງກັດ:

- ນຸ່ງເຄື່ອງຫຼົມໆແລະຫົ່ມເສື້ອແຂນຍາວ
- ທາຢາໄລ່ຍູງ (ຊຶ່ງມີສານ DEET ແລະ picardin) ຕາມພາກສ່ວນຮ່າງກາຍທີ່ບໍ່ໄດ້ປົກປິດ
- ໃຫ້ຢູ່ໃນບ່ອນທີ່ກັນຍູງກັດ (ເຊັ່ນ ກາງມຸ້ງນອນ).

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ເປັນການຍາກທີ່ຈະຮູ້ວ່າເປັນພະຍາດໄຂ້ຍູງໃນລະຍະຕົ້ນໆ ເພາະວ່າມີການຕິດເຊື້ອຫຼາຍໆຢ່າງທີ່ມີສິ່ງສໍ່ ສະແດງແລະມີ ອາການ ຄ້າຍຄືກັນ. ການກວດຫາໂຣກຕ້ອງໄດ້ທຳການກວດເລືອດ.

## ໂຣກນີ້ຈະປິ່ນປົວໄດ້ຢ່າງໃດ?

- ບໍ່ມີການປິ່ນປົວສຳລັບໂຣກນີ້ໂດຍສະເພາະ. ແພດອາດຈະປິ່ນປົວອາການຂາດນ້ຳແລະ ອາການໄຂ້ຂອງຄົນເຈັບ. ໃນກໍຣະນີຂອງຄົນເຈັບຮ້າຍແຮງອາດຕ້ອງໄດ້ເອົາເຂົ້າປິ່ນປົວໃນຫ້ອງສຸກເສີນ.
- ໃນເຂດທີ່ມີຍູງ *Aedes aegypti* (ເຊັ່ນ ທາງພາກເໜືອຂອງ ຣັດ ຄວີນສ໌ແລນດ໌) ຄົນເຈັບຈະຖືກປິ່ນປົວຢູ່ໃນຫ້ອງທີ່ປ້ອງກັນຍຸງໄດ້.

## ຜແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ພະຍາດນີ້?

ບັນດາຫ້ອງທົດລອງແລະໂຮງໝໍຕ້ອງໄດ້ລາຍງານກໍຣະນີຂອງພະຍາດໄຂ້ຍູງຕໍ່ທາງການສາທາຣະນະສຸກ ໃນເຂດທ້ອງຖິ່ນ. ຜແນກສາທາຣະນະສຸກຈະຕິດຕາມກໍຣະນີທີ່ອາດເກີດຂຶ້ນໄດ້ເພື່ອໃຫ້ຮູ້ເຖິງສາເຫດຂອງ ທີ່ມາຂອງພະຍາດແລະເພື່ອປ້ອງກັນພະຍາດໄຂ້ຍູງໃນເຂດທີ່ອາດເກີດມີໄຂ້ຍູງຂຶ້ນໄດ້ງ່າຍໃນອອສເຕຣເລັຍ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**[www.health.nsw.gov.au](http://www.health.nsw.gov.au)**